## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 5 ກັນຍາ 2021 (09-05-2021)

---

### ຄວາມແນ່ໃຈຂອງການອະພັຍ

*ມີຄວາມແນ່ໃຈຫຍັງທີ່ທ່ານນັບວ່າເຊື່ອຖືໄດ້ໃນຊີວິດ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາໄດ້ຮັບການອະພັຍເມື່ອເຮົາສາຣະພາບບາບຂອງເຮົາ ແລະເດີນກັບພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາສາມາດແນ່ໃຈໃນສິ່ງໃດສິ່ງນຶ່ງໄດ້ບໍ່? ນັກປຣັຊຍາບາງຄົນຈະບອກທ່ານວ່າພວກເຮົາບໍ່ສາມາດແນ່ໃຈສິ່ງໃດ. ຫຼັງຈາກ Covid-19 ເຂົ້າມາປີກາຍແລະສະເທືອນຕໍ່ກິຈວັດຊີວິດຂອງເຮົາທຸກວັນ, ເບິ່ງເໝືອນວ່າບໍ່ມີສິ່ງໃດແນ່ນອນ. ເຖິງຢ່າງໃດກໍຕາມພວກເຮົາກໍສາມາດມີການຮັບປະກັນ. ພຣະເຈົ້າປາຖນາໃຫ້ຜູ້ເຊື່ອທຸກຄົນໄດ້ຮັບການຮັບປະກັນຂອງຄວາມພົ້ນ. ໜ້າເສົ້າໃຈ, ຄຣິສຕຽນຫຼາຍຄົນໝົກໝຸ້ນຢູ່ກັບຄວາມສົງສັຍແຕ່ລະວັນເມື່ອມັນກ່ຽວຂ້ອງກັບຊີວິດນິຣັນຂອງເຂົາ. ບາງຄົນຍັງເຊື່ອວ່າມັນເປັນໄປບໍ່ໄດ້ ທີ່ຈະຮູ້ແນ່ວ່າຄົນຜູ້ນຶ່ງໄດ້ຮັບຄວາມພົ້ນຢ່າງແນ່ນອນແລ້ວ. ເວລາທີ່ຜູ້ເຊື່ອບໍ່ແນ່ໃຈໃນຄວາມພົ້ນຂອງເຂົາ ພົບວ່າຕົນເອງໄດ້ດິ່ງລົງເຫວແຫ່ງຄວາມສົງສັຍແລະຄວາມສິ້ນຫວັງ, ຄວາມບໍ່ແນ່ນອນໃຈວ່າພຣະເຈົ້າໄດ້ໃຫ້ອະພັຍເຂົາແທ້ຫຼືບໍ່. ພວກອື່ນໆອະນຸຍາດໃຫ້ການກ່າວໂທດຕົວເອງ ຫົວເຍາະເຍີ້ຍການຮັບປະກັນ ທີ່ພຣະເຈົ້າປາຖນາໃຫ້ເຂົາມີ.

ແຕ່ພວກເຮົາສາມາດແນ່ໃຈວ່າເຮົາໄດ້ຮັບການຮັບປະກັນ! ອັຄສາວົກໂຢຮັນໄດ້ບອກຢ່າງແຈ່ມແຈ້ງໃນພຣະຄຳ 1 ໂຢຮັນ 5:13 ວ່າ: *"ຂໍ້ຄວາມເຫຼົ່ານີ້ເຮົາໄດ້ຂຽນມາເຖິງເຈົ້າທັງຫຼາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫຼາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕລອດໄປເປັນນິດ."* ພວກເຮົາມີການຮັບປະກັນຂອງພຣະເຈົ້າກ່ຽວກັບຊີວິດອັນຕລອດໄປເປັນນິດ ໃນຂນະທີ່ເຮົາໄດ້ຮັບການຮັບປະກັນການໃຫ້ອະພັຍຂອງເຮົາ.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>1 ໂຢຮັນ 1:5-7</u>.**

*5 ນີ້ແຫຼະ, ເປັນຂ່າວສານທີ່ເຮົາໄດ້ຍິນຈາກພຣະອົງແລະໄດ້ປະກາດແກ່ທ່ານທັງຫຼາຍວ່າ ພຣະເຈົ້າຊົງເປັນຄວາມ*
*ສວ່າງ ໃນພຣະອົງບໍ່ມີຄວາມມືດເລີຍ. 6 ຖ້າເຮົາຈະວ່າເຮົາຮ່ວມສາມັກຄີທັມກັບພຣະອົງ ແລະຍັງດຳເນີນຊີວິດຢູ່ໃນ*
*ຄວາມມືດ ເຮົາກໍເວົ້າຕົວະ ແລະ ບໍ່ປະຕິບັດຕາມຄວາມຈິງ. 7 ແຕ່ຖ້າເຮົາທັງຫຼາຍດຳເນີນຊີວິດຢູ່ໃນຄວາມສວ່າງ*
*ເໝືອນຢ່າງພຣະອົງຊົງສະຖິດຢູ່ໃນຄວາມສວ່າງ ພວກເຮົາກໍຮ່ວມສາມັກຄີທັມຊຶ່ງກັນແລະກັນ ແລະພຣະໂລຫິດ*
*ຂອງພຣະເຢຊູ ພຣະບຸດຂອງພຣະອົງກໍຊຳຣະລ້າງເຮົາທັງຫຼາຍຈົນໝົດສິ້ນ.*

ພຣະລັກສນະຂອງພຣະເຈົ້າແມ່ນຮາກຖານຂອງການໃຫ້ອະພັຍພວກເຮົາ. ເວລາໂຢຮັນຂຽນວ່າ, *ພຣະເຈົ້າຊົງເປັນຄວາມສວ່າງ,"* ເພິ່ນບັລຍາຍພຣະລັກສນະຂອງພຣະເຈົ້າ. ໃນເມື່ອພຣະອົງຊົງເປັນຄວາມສວ່າງ, "ມັນກໍບໍ່ມີຄວາມມືດໃນພຣະອົງເດັດຂາດ. ເພື່ອບັລຍາຍວ່າພຣະເຈົ້າຊົງເປັນຄວາມສວ່າງບໍ່ໄດ້ໝາຍເຖິງຄວາມບໍຣິສຸດຂອງພຣະອົງເທົ່ານັ້ນ ແຕ່ໝາຍເຖິງຄຸນຄວາມດີທາງສິນທັມຂອງພຣະອົງພ້ອມ. ໃນຄວາມຊອບທັມແລະຄວາມດີໂດຍສົມບູນຂອງພຣະອົງ, ພຣະເຈົ້າບົ່ງບອກເຖິງສະພາບການໃຫ້ອະພັຍຂອງເຮົາ. ສະພາບຂອງພຣະເຈົ້າແຈ່ມແຈ້ງ: ພວກ

ເຮົາໄດ້ຮັບການອະພັຍເວລາເຮົາສາຣະພາບຄວາມບາບຂອງເຮົາ ແລະອຸທິດຊີວິດຂອງເຮົາດໍາເນີນໄປກັບພຣະຄຣິດ.

*ພວກເຮົາເຂົ້າໃຈຮູບພາບຄວາມສວ່າງແລະຄວາມມືດໃນຂໍ້ພຣະຄັມພີນີ້ຢ່າງໃດ?*

ພວກເຮົາໄດ້ຮັບການອະພັຍເມື່ອພວກເຮົາຫັນຫຼັງຈາກຄວາມມືດສູ່ຄວາມສວ່າງ. ທ່ານໂຢຮັນໄດ້ໃຫ້ຄວາມສໍາຄັນສິ່ງນີ້ດ້ວຍການເບິ່ງຄວາມຈິງຈາກສອງດ້ານ.

- **ຄວາມມືດ.** ຄວາມເຫັນກ່ຽວກັບການຍ່າງໝາຍເຖິງທາງຊີວິດຂອງບຸກຄົນ. ຖ້າບຸກຄົນໃດດໍາເນີນຊີວິດສືບຕໍ່ໄປ, ໂດຍບໍ່ໄດ້ສາຣະພາບບາບແລະອ້າງວ່າໄດ້ຮັບການອະພັຍແລະສາມັກຄີທັມກັບພຣະເຈົ້າ, ລາວກໍຄິດຜິດຢ່າງໜ້າເສົ້າໃຈ. ທາງທີ່ລາວດໍາເນີນຊີວິດຊີ້ບອກເຖິງຄວາມຈິງວ່າລາວບໍ່ໄດ້ສາມັກຄີທັມກັບພຣະເຈົ້າ.

ຂ່າວປະເສີດມີຣິດອໍານາດປ່ຽນຊີວິດຄົນໄດ້. ເມື່ອພວກເຮົາໂອບກອດເອົາພຣະທັມ, ຣິດອໍານາດຂອງມັນກໍນໍາພາສູ່ການປ່ຽນແປງ. *"ເຫດສັນນັ້ນ ຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວຖານະເກົ່າເຫຼົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ທັງນັ້ນ" (2 ກຣທ 5:17).* ຣິດອໍານາດການທໍາງານຂອງຂ່າວປະເສີດໃນຊີວິດເຮົາແມ່ນສິ່ງທີ່ຍ້າຍເຮົາຈາກຄວາມບາບສູ່ຄວາມລອດພົ້ນ. ຜູ້ຊຶ່ງຊີວິດໄດ້ຮັບການປ່ຽນແປງດ້ວຍຣິດອໍານາດຂອງຂ່າວປະເສີດກໍຖືກຍົກຍ້າຍສູ່ອານາຈັກພຣະບຸດແລະບາບຂອງລາວກໍໄດ້ຮັບການອະພັຍແລ້ວ!
ການປ່ຽນແປງອັນຮຸນແຮງນີ້ໝາຍເຖິງການເດີນໄປໃນຄວາມມືດ ຊຶ່ງກົງກັນຂ້າມກັບລັກສນະການສາມັກຄີທັມຂອງພຣະເຈົ້າຢ່າງສິ້ນເຊີງ.

- **ຄວາມສວ່າງ.** ເມື່ອເຮົາຫັນຫຼັງໃຫ້ຄວາມມືດແລະເດີນໄປກັບພຣະຄຣິດ, ພວກເຮົາໄດ້ການຮັບປະກັນການໃຫ້ອະພັຍ. ການເດີນໃນຄວາມສວ່າງແມ່ນການດໍາເນີນຊີວິດຄົງທີ່ກັບຕາມນໍ້າພຣະທັຍພຣະເຈົ້າ. ແນ່ນອນ, ນີ້ບໍ່ໄດ້ໝາຍຄວາມວ່າພວກເຮົາສົມບູນແລ້ວ, ແຕ່ໝາຍຄວາມວ່າເສັ້ນທາງແລະຈຸດປະສົງຂອງຊີວິດເຮົາແມ່ນການສແວງຫາພຣະເຈົ້າ. ພວກເຮົາໄດ້ຮັບການຄໍ້າປະກັນການອະພັຍຂອງເຮົາເມື່ອການສາມັກຄີທັມອອກຈາກໃຈຂອງເຮົາ.

ຖ້າຂັ້ນຕອນຊີວິດຂອງທ່ານໄດ້ຫັນຫຼັງໃຫ້ຄວາມມືດແລະສແວງຫາຄວາມບໍຣິສຸດ, ແລ້ວບໍ່ຕ້ອງສົງສັຍການອະພັຍຂອງພຣະເຈົ້າຕໍ່ທ່ານ. ພວກເຮົາໄດ້ຮັບການອະພັຍເວລາເຮົາສາຣະພາບຄວາມບາບຂອງເຮົາແລະເດີນໄປກັບພຣະຄຣິດ.

## 2. <u>1 ໂຢຮັນ 1:8-10.</u>

*8ຖ້າເຮົາທັງຫຼາຍເວົ້າວ່າພວກເຮົາບໍ່ມີບາບພວກເຮົາກໍຫຼອກລວງຕົນເອງ ແລະຄວາມຈິງບໍ່ໄດ້ຢູ່ໃນພວກເຮົາ. 9ຖ້າເຮົາທັງຫຼາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊໍາຣະລ້າງເຮົາທັງຫຼາຍຈາກການອະທັມໝົດສິ້ນ. 10ຖ້າເຮົາທັງຫຼາຍເວົ້າວ່າພວກເຮົາບໍ່ໄດ້ເຮັດບາບ ກໍທີ່ກັບວ່າພວກເຮົາໄດ້ເຮັດໃຫ້ພຣະອົງເປັນຜູ້ຕົວະແລະພຣະທັມຂອງພຣະອົງກໍບໍ່ຢູ່ໃນພວກເຮົາແລ້ວ.*

ໃນຂໍ້ 5-7, ທ່ານໂຢຮັນໄດ້ໃຫ້ພວກເຮົາຄວາມມືດ/ຄວາມສວ່າງທີ່ກົງກັນຂ້າມກັນເພື່ອຢໍ້າວ່າພວກເຮົາຮັບການອະພັຍເມື່ອພວກເຮົາຫັນຈາກຄວາມມືດສູ່ຄວາມສວ່າງ. ໃນຂໍ້ 8-10, ທ່ານອັຄສາວົກໄດ້ໃຊ້ແບບຊົ່ວດີ:

1. **ການຫຼອກລວງ.** ການບໍ່ຍອມຮັບບາບແມ່ນຄວາມຄວາມຜິດພາດຕໍ່ຄໍາສັ່ງສູງສຸດ. ເປັນຫຍັງບຸກຄົນນຶ່ງຈຶ່ງບໍ່ສໍານຶກແລະບໍ່ສາຣະພາບບາບ?

- **ຄວາມຊອບທັມຂອງຕົວເອງ.** ນິສັຍຄວາມຊອບທັມຂອງຕົວເອງເວົ້າວ່າ, "ຂ້ອຍບໍ່ໄດ້ຊົ່ວປານນັ້ນຕາມຄວາມເປັນຈິງ, ຂ້ອຍກໍເປັນຄົນດີສົມຄວນຖ້າທຽບໃສ່ບາງຄົນ. ເພາະສະນັ້ນ, ຂ້ອຍຈຶ່ງບໍ່ມີຫຍັງສາຣະພາບ."

- **ການຫຼອກລວງຕົວເອງ.** ພວກເຮົາສາມາດປອບໃຈເຮົາເອງວ່າບາບຂອງເຮົາບໍ່ແມ່ນເລື່ອງໃຫຍ່, ແຕ່ຈະເປັນຄວາມຜິດພາດຢ່າງຮ້າຍແຮງ. ຄົນມັກຫຼອກລວງຕົວເອງເວລາພວກເຂົາພະຍາຍາມຕັດສິນແລະແກ້ຕົວຄວາມບາບຂອງເຂົາ. ອັນນີ້ງການຫຼອກລວງຂອງການຫຼອກລວງຕົວເອງຈະສະສົມຄວາມໂສກເສົ້າໄວ້ເທິງຫົວຂອງເຂົາເອງ. ສິ່ງຊົ່ວທີ່ສຸດ, ການປະຕິເສດບາບຂອງຕົນແມ່ນການເອີ້ນພຣະເຈົ້າວ່າເປັນຜູ້ຕົວະ.

2. **ການສາຣະບາບ:** ຄໍາກົງກັນຂ້າມກັບການຫຼອກລວງແມ່ນການສາຣະພາບ. ການຖ່ອມຕົວສາຣະພາບນໍາສູ່ການໃຫ້ອະພັຍ. ພວກເຮົາໄດ້ຮັບການອະພັຍເວລາພວກເຮົາເບິ່ງຄວາມບາບຂອງເຮົາໃນຄວາມສວ່າງຄວາມຊອບທັມຂອງພຣະຄຣິດແລະຢາກສາຣະບາບຊຶ່ງມັນແມ່ນ: ຄວາມຊົ່ວຮ້າຍຕໍ່ສູ້ພຣະເຈົ້າເອງ. ທ່ານບໍ່ມີເຫດຜົນທີ່ຈະສົງສັຍການໃຫ້ອະພັຍເມື່ອທ່ານສາຣະພາບບາບແລະເດີນກັບພຣະຄຣິດ. ພຣະລັກສນະທີ່ເຊື່ອຖືໄດ້ຂອງພຣະເຈົ້າປ້ອງກັນພຣະສັນຍາຂອງການໃຫ້ອະພັຍ. ຂ້າພະເຈົ້າແນ່ໃຈວ່າທ່ານໄດ້ຍິນຄໍາວ່າ ຄໍາສັນຍາຈະດີພຽງໃດມັນຂຶ້ນຢູ່ກັບຜູ້ໃຫ້ຄໍາສັນຍານັ້ນ. ເຫດສະນັ້ນຈົ່ງພິຈາຣະນາວ່າ, ແມ່ນໃຜເປັນຜູ້ໃຫ້ຄໍາສັນຍານີ້? ພຣະເຈົ້າຊົງ "ສັດຊື່ແລະທ່ຽງທັມ," ແລະຄໍາສັນຍາຂອງພຣະອົງກໍເປັນຈິງ.

*ທ່ານພົບຄວາມຫຍຸ້ງຍາກຫຍັງແດ່ກ່ຽວກັບການຮັບການອະພັຍ?*

## 3. <u>1 ໂຢຮັນ 2:1-2.</u>

*[1]ລູກນ້ອຍທັງຫຼາຍຂອງເຮົາເອີຍ, ເຮົາຂຽນຂໍ້ຄວາມເຫຼົ່ານີ້ມາເຖິງພວກເຈົ້າເພື່ອພວກເຈົ້າຈະບໍ່ໄດ້ເຮັດຜິດ ແຕ່ຖ້າຄົນໃດເຮັດຜິດພວກເຮົາກໍມີທະນາຍຄວາມຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມທີ່ສະຖິດຢູ່ກັບພຣະບິດາ. [2]ແມ່ນດ້ວຍພຣະອົງນັ້ນແຫຼະ, ທີ່ພຣະເຈົ້າຊົງຍົກຜິດບາບຂອງພວກເຮົາເສັຽ ແລະບໍ່ແມ່ນແຕ່ບາບຂອງພວກເຮົາພວກດຽວແຕ່ທັງຜິດບາບຂອງມະນຸດທັງປວງໃນໂລກເໝືອນກັນ.*

ທ່ານໂຢຮັນຮັບປະກັນຜູ້ອ່ານວ່າ,"*ຖ້າຄົນໃດເຮັດຜິດພວກເຮົາກໍມີທະນາຍຄວາມຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມທີ່ສະຖິດຢູ່ກັບພຣະບິດາ.*" ຄໍາວ່າທະນາຍໝາຍຄວາມວ່າ "ຜູ້ຊຶ່ງໄດ້ຮັບການຮຽກເອີ້ນໃຫ້ເຂົ້າຂ້າງຜູ້ໃດຜູ້ນຶ່ງ." ແມ່ນທີ່ປຶກສາປ້ອງກັນຈໍາເລີຍໃນສານ, ບຸກຄົນທີ່ຍື່ນມືເຂົ້າຊ່ວຍຜູ້ອື່ນ. ຂ້າພະເຈົ້າບໍ່ຄິດວ່າຈະມີຫັຍງຊູໃຈດີໄປກວ່າການຮູ້ຈັກພຣະເຢຊູເປັນຜູ້ຢືນສູ້ຕາງເຮົາ. ລອງວາດພາບເບິ່ງຕອນທ່ານພະຍາຍາມຕໍ່ໜ້າຜູ້ພິພາກສາ. ທະນາຍຂອງທ່ານຢືນໃຫ້ການຄະດີຂອງທ່ານຕໍ່ຜູ້ພິພາກສາ, ແລ້ວທ່ານກໍປະຫຼາດໃຈ, ເມື່ອພົບວ່າທະນາຍສູ້ຄະດີເພື່ອທ່ານນັ້ນກໍແມ່ນຜູ້ພິພາກສາເໝືອນກັນ! ຮູບພາບນີ້ສະແດງໃຫ້ເຫັນຄວາມເປັນຈິງຂອງຄວາມສັມພັນຂອງເຮົາໃນພຣະຄຣິດ.

ທ່ານບໍ່ມີຄວາມສົງສັຍໃນການໃຫ້ອະພັຍໃນເມື່ອພຣະຄຣິດເປັນທະນາຍຝ່າຍທ່ານ. ພື້ນຖານການເປັນທະນາຍຂອງພຣະຄຣິດແມ່ນພຣະໂລຫິດທີ່ພຣະອົງຫຼັ່ງໄຫຼລົດໃຊ້ໃຫ້ເຮົາ. ເຫດຜົນຂອງການລົດໃຊ້ກໍຄືເອົາໃຈກຸ່ມຄົນທີ່ມີຄວາມຄຸ້ນເຄືອງ. ພຣະຄຣິດ, ໂດຍທາງການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ, ເປັນເຄື່ອງຖວາຍອັນຊອບທັມທີ່ພຣະເຈົ້າຍອມຮັບ. ແຕ່ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ຄວນຮັບຮູ້ພຣະອົງໃນຖານະພຣະຂອງຄົນຕ່າງຊາດທີ່ບໍ່ພໍໃຈການຫຼັ່ງພຣະໂລຫິດຊໍາລະລ້າງ. ໃນທາງກົງກັນຂ້າມ, ພຣະເຈົ້າພຣະບິດາໄດ້ຈັດແຈງເຄື່ອງຖວາຍບູຊາດ້ວຍພຣະອົງເອງ; ດັ່ງນັ້ນ, ພຣະອົງຊົງຢຸດພຣະພິໂຣດຂອງພຣະອົງໂດຍການສລະພຣະບຸດອົງດຽວຂອງພຣະອົງມາຕາຍແທນເຮົາ. ຍິ່ງໄປກວ່ານັ້ນ, ພຣະຄຣິດຊົງພໍໃຈສລະຊີວິດຂອງພຣະອົງເປັນເຄື່ອງບູຊາແທນເຮົາ. ເຫດສັນນັ້ນ, ໃນຂນະທີ່ເຮົາເປັນຄົນບາບຢູ່ນັ້ນ, ພຣະຄຣິດໄດ້ທູນຂໍຕໍ່ພຣະເຈົ້າໂດຍອີງໃສ່ພາຣະກິດທີ່ເສັດສິ້ນບົນໄມ້ກາງແຂນ, ຊຶ່ງພຣະບິດາໄດ້ຊົງປະທານແລະຊົງຮັບເອົາ. ຄວາມຈິງນີ້ແມ່ນຂ່າວດີແທ້ຈິງ! ພຣະຄຣິດໄດ້ຊົງສິ້ນພຣະຊົນແທນຄວາມບາບຂອງມະນຸສໂລກ. ການເພື່ອແຜ່ເຄື່ອງຖວາຍບູຊາຂອງພຣະອົງແມ່ນເພື່ອທຸກໆຄົນທີ່ເຊື່ອ-ບໍ່ຈໍາກັດ

ສີຜິວພັນ, ເຜົ່າພັນ, ຫຼືຄວາມມີຄວາມຈົນ. ພຣະອົງສິ້ນພຣະຊົນເພື່ອຄົນທຸກພາສາ, ທຸກເຜົ່າພັນ, ແລະທຸກຊາດສາມາດຮູ້ຈັກພຣະອົງແລະສັຣເສີນພຣະອົງ.

*ການອະພັຍຂອງພຣະເຈົ້າມີຜົນຕໍ່ຊີວິດທ່ານຢ່າງໃດ?*

ຄົນເຈັບມັກຕ້ອງການໃສ່ເລືອດຫຼັງຈາກອຸບັດຕິເຫດຮ້າຍແຮງຫຼືຂນະຜ່າຕັດ. ເຖິງຢ່າງໃດກໍຕາມ, ຄົນເຈັບຕ້ອງໄດ້ຮັບເລືອດປະເພດຂ້າງຄຽງກັບປະເພດເລືອດຂອງຕົນ. ເລືອດທີ່ບໍ່ຕົງກັນອາດເປັນເຫດໃຫ້ເປັນຜົນຮ້າຍຕໍ່ຊີວິດ. ແຕ່ພວກຄິດຄົ້ນໃນຍີ່ປຸ່ນໄດ້ສ້າງເລືອດທຽມຊຶ່ງອາດສີດໃຫ້ທຸກຄົນໄດ້ໂດຍບໍ່ເລືອກປະເພດເລືອດຊຶ່ງບໍ່ມີຄວາມຫຍຸ້ງຍາກນີ້ອີກ. ອາຈານ Manabu Kinoshita ກ່າວວ່າ, "ມັນເປັນການຍາກທີ່ຈະສະສົມປະລິມານເລືອດພຽງພໍໄວ້ສີດໃນໝູ່ເກາະທີ່ຫ່າງໄກ... ເລືອດປອມຈະສາມາດຮັກສາຊີວິດຄົນທີ່ບໍ່ສາມາດຮັກສາຊີວິດໄວ້ໄດ້."

ເລືອດທີ່ດີກວ່າເລືອດປອມແມ່ນພຣະໂລຫິດພຣະເຢຊູເຮັດໃຫ້ທຸກຄົນທີ່ຮັບເອົາໄດ້ພົ້ນ. ຜູ້ທີ່ມາຫາພຣະຄຣິດຈະບໍ່ມີການປະຕິເສດກັນ ແລະຈະບໍ່ພົບຄວາມຂາດແຄນການລຳລຽງ. ເມື່ອທ່ານພົບຄວາມສົງສັຍໃນຕົວເອງ,ຈົ່ງເພິ່ງພຣະເຢຊູເປັນທະນາຍແລະເປັນເຄື່ອງບູຊາ, ຜູ້ຊຶ່ງໄດ້ຫຼັ່ງພຣະໂລຫິດຂອງພຣະອົງເອງເພື່ອທ່ານ.

ການຫັນຫຼັງໃຫ້ຄວາມມືດ, ສາຣະພາບບາບ, ແລະມີພຣະເຢຊູເປັນທະນາຍ ແລະຜູ້ຊຶ່ງໄດ້ສລະພຣະໂລຫິດຂອງພຣະອົງເພື່ອລົດໃຊ້ບາບແທນເຮົາຈະບໍ່ປະໃຫ້ມີຊ່ອງຫວ່າງສຳລັບຄວາມສົງສັຍ. ສະນັ້ນ, ພວກເຮົາສາມາດແນ່ໃຈໃນການໃຫ້ອະພັຍຍ້ອນການສາຣະພາບ ແລະການເດີນໄປກັບພຣະຄຣິດ.

## ນຳໃຊ້ໃນຊີວິດ

ພວກເຮົາໄດ້ຮັບການອະພັຍເມື່ອເຮົາສາຣະພາບບາບແລະເດີນໄປກັບພຣະຄຣິດ. ທ່ານຈະເຮັດຫຍັງໃນອາທິດນີ້? ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ກວດກາ.** ຈົ່ງພິຈາຣະນາຫຼັກຄຳສອນທີ່ໄດ້ສອນໃນວັນນີ້. ມັນອາດຊ່ອຍຊູຄວາມກ້າຫານທ່ານໃນຖານະເປັນຜູ້ເຊື່ອຫຼືຕໍ່ສູ້ທ່ານໃນຖານະເປັນຜູ້ບໍ່ເຊື່ອ.
- **ສະມາທິ.** ແຕ່ລະວັນ ໃນອາທິດນີ້ ຈົ່ງອະທິຖານໂດຍອີງໃສ່ພຣະທັມເພງສັຣເສີນ 139:23-24, ຄົ້ນຫາຂ້ານ້ອຍ, ພຣະເຈົ້າແລະຮູ້ຈັກຫົວໃຈຂອງຂ້ານ້ອຍ; ພິສູດຂ້ານ້ອຍແລະຮູ້ຈັກຄວາມນຶກຄິດຂອງຂ້ານ້ອຍ. ເບິ່ງວ່າມີທາງໃດທີ່ຝ່າຝືນໃນຂ້ານ້ອຍ, ຂໍຊົງນຳຂ້ານ້ອຍໄປໃນທາງຊີວິດອັນຕລອດໄປເປັນນິດດ້ວຍເຖີ້ນ.
- **ແບ່ງປັນ.** ຈົ່ງແບ່ງປັນເຣື່ອງການໃຫ້ອະພັຍຂອງທ່ານກັບຜູ້ໃດຜູ້ນຶ່ງໃນອາທິດນີ້. ແຕ່ຢ່າຊູ່ຢ້ານການທີ່ເຂົາເຮັດໃຫ້ພວກທ່ານສະດຸ້ງຕົກໃຈນັ້ນ ແລະຢ່າວິຕົກກັງວົນ. ແຕ່ໃນໃຈຂອງທ່ານທັງຫຼາຍ, ຈົ່ງເຄົາຣົບນັບຖືພຣະຄຣິດວ່າເປັນອົງພຣະຜູ້ເປັນເຈົ້າ ຈົ່ງມີໃຈພ້ອມຢູ່ສເມີ ເພື່ອພວກທ່ານຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກທ່ານວ່າ ທ່ານມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້. ແລ້ວຈົ່ງເຮັດດ້ວຍຄວາມສຸພາບແລະອ່ອນນ້ອມ."
  (1 ເປໂຕ 3:14ຂ-16ກ).

ຖ້າພວກເຮົາໄດ້ຮຽນໃນປີຜ່ານມາ, ມັນມີຫຼາຍສິ່ງທີ່ເຮົາບໍ່ສາມາດແນ່ນອນໃຈ. ແຕ່ພວກເຮົາມີການຮັບປະກັນຂອງພຣະເຈົ້າເຣື່ອງຊີວິດອັນຕລອດໄປເປັນນິດແລະການຮັບປະກັນການໃຫ້ອະພັຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**